**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ພະແນກ ໂຍທາທິການ ແລະ ຂົນສົ່ງ**

ເລກທີ...1862.../ຍທຂ.ສຂ

ສະຫວັນນະເຂດ, ວັນທີ..12...ມີນາ...2026

# ໜັງສືເຊີນເຂົ້າຮ່ວມການປະມູນ

## ວ່າຈ້າງທີ່ປຶກສາຄວບຄຸມການກໍ່ສ້າງໂຄງການ ປ້ອງກັນຕາຝັ່ງເຈື່ອນ ບ້ານປາກເຊບັ້ງໄຟ (ໄລຍະ02)

## ເມືອງໄຊບູລີ ແຂວງສະຫວັນນະເຂດ

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງໆສະຫວັນນະເຂດ ສະບັບເລກທີ 1491/ສຂ, ລົງວັນທີ 10 ກໍລະກົດ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກໂຍທາທິການ ແລະ ຂົນສົ່ງ;
- ອີງຕາມ ແຈ້ງການລົງທຶນຂອງລັດ ປະຈຳປີ 2026 ຂອງພະແນກການເງິນ ແຂວງ ເລກທີ 246 /ກງຂ ລົງວັນທີ 6 ກຸມພາ 2026;

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ ປີ **2026** ເພື່ອນຳໃຊ້ເຂົ້າໃນການປະຕິບັດ **ວ່າຈ້າງທີ່ປຶກສາຄວບຄຸມການກໍ່ສ້າງໂຄງການປ້ອງກັນຕາຝັ່ງເຈື່ອນ ບ້ານປາກເຊບັ້ງໄຟ (ໄລຍະ02) ເມືອງໄຊບູລີ ແຂວງສະຫວັນນະເຂດ,** ສະນັ້ນ, ຈຶ່ງຂໍເຊີນບັນດາບໍລິສັດ, ຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມແຂ່ງຂັນປະມູນ ໂຄງການດັ່ງກາວ ລາຍລະອຽດມີ ດັ່ງນີ້:

1. ການປະມູນຈະດຳເນີນຕາມຂະບວນການ ແລະ ຂັ້ນຕອນການປະມູນເປີດກວ້າງພາຍໃນ ເຊິ່ງໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບ ເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
2. ການປະມູນແມ່ນອະນຸຍາດ ບໍລິສັດ ທີ່ມີເງື່ອນໄຂ ແລະ ມາດຖານ ດັ່ງນີ້:
   - ມີໃບທະບຽນວິສາຫະກິດ, ມີໃບອະນຸຍາດດຳເນີນທຸລະກິດ ບໍລິການທີ່ປຶກສາວິສະວະກຳເປັນຕົ້ນ: ກໍ່ສ້າງທາງນ້ຳ, ຂົວ-ທາງ ແລະ ຊົນລະປະທານ ປີ **2026**;
   - ມີໃບຢັ້ງຢືນ ມອບພັນທະອາກອນ ປະຈຳປີ 2025 ທີ່ຖືກຕ້ອງຕາມລະບຽບການ;
   - ຜູ້ເຂົ້າຮ່ວມແຂ່ງຂັນຈະຕ້ອງຄ້ຳປະກັນການປະມູນ ດ້ວຍເງິນສົດ ຫຼື ໜັງສືຢັ້ງຢືນຄ້ຳປະກັນ ອອກໂດຍທະນາຄານພາຍໃນ ເຊິ່ງມູນຄ່າການຄ້ຳປະກັນ ບໍ່ໃຫ້ຫຼຸດ 2 % ຂອງມູນຄ່າທີ່ສະເໜີ, ມີສະພາບຄ່ອງທາງດ້ານການເງິນ, ມີວິຊາການທີ່ຊຳນານງານ, ມີປະສົບການບໍລິການທີ່ປຶກສາວິສະວະກຳເປັນຕົ້ນ: ຄວບຄຸມການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ, ກໍ່ສ້າງຂົວ-ທາງ ແລະ ກໍ່ສ້າງຊົນລະປະທານ;
3. ເອກະສານປະມູນພິມພັນເອົາໄດ້ ທີ່ຂະແໜງທາງນ້ຳ ພະແນກ ໂຍທາທິການ ແລະ ຂົນສົ່ງ ໃນໂມງລັດຖະການ, ລາຄາ 01 ຊຸດ 500,000 ກີບ (ຫ້າແສນ ກີບ);
4. ເອກະສານປະມູນຕ້ອງສົ່ງເຖິງ ຂະແໜງທາງນ້ຳ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ, ກ່ອນເວລາປິດຮັບຊອງປະມູນ ໃນວັນທີ 07 ເມສາ 2026 ເວລາ 14 ໂມງ 00 ນາທີ ແລະ ຈະເປີດຊອງປະມູນ ໃນເວລາ 14 ໂມງ 15 ນາທີ ຂອງວັນດຽວກັນ, ທີ່ຫ້ອງປະຊຸມເບີ 02 ຊັ້ນ 03 ພະແນກ ຍທຂ ແຂວງ ໂດຍຊ່ອງໜ້າ ຄະນະກຳມະການ ປະມູນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ, ຊອງເອກະສານປະມູນໃດທີ່ສົ່ງຊ້າ ແມ່ນຈະບໍ່ໄດ້ຖືກຮັບພິຈາລະນາ.

**ຫົວໜ້າພະແນກ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ສະຫວັນນະເຂດ

**ຄຳພອງ ສົມວິຈິດ**